ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 340/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 APR 2011

# ຂໍ້ຕົກລົງ
# ວ່າດ້ວຍຂອບເຂດການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຂອງກົມຄຸ້ມຄອງທະນາຄານທຸລະກິດ, ກົມຄຸ້ມຄອງສະຖາບັນການເງິນ ແລະ ສາຂາທະນາຄານ ແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ສະບັບດັດແປງເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມປຶກສາຫາລື ກ່ຽວກັບຂອບເຂດສິດໃນການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ຄັ້ງວັນທີ 21 ພຶດສະພາ 2010.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕົກລົງ:**

ກຳນົດຂອບເຂດສິດໃນການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໂດຍມອບໝາຍໜ້າທີ່ຮັບຜິດຊອບໃຫ້ແກ່ກົມຄຸ້ມຄອງທະນາຄານທຸລະກິດ (ກຄທ), ກົມຄຸ້ມຄອງສະຖາບັນການເງິນ (ກຄສງ) ແລະ ສາຂາທະນາຄານ ແຫ່ງ ສປປ ລາວ (ສາຂາ ທຫລ) ດັ່ງນີ້:

**ມາດຕາ 1. ວຽກງານພິຈາລະນາການຂໍສ້າງຕັ້ງ**

1.1 ກຄທ ມີໜ້າທີ່ຄົ້ນຄວ້າການຂໍສ້າງຕັ້ງທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສາຂາທະນາຄານທຸລະກິດພາຍໃນ ແລະ ສາມາດມອບໝາຍໃຫ້ສາຂາ ທຫລ ດຳເນີນການໃດໜຶ່ງ ເປັນຕົ້ນ: ການຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ, ຕິດຕາມ ຫຼື ເຂົ້າຮ່ວມໃນການກວດກາຄວາມຄືບໜ້າໃນການປະຕິບັດເງື່ອນໄຂການຂໍສ້າງຕັ້ງ;

1.2 ກຄສງ ຮັບຜິດຊອບຄົ້ນຄວ້າການຂໍສ້າງຕັ້ງສະຖາບັນການເງິນ ຢູ່ບັນດາແຂວງນອກຂອບເຂດຄວາມຮັບຜິດຊອບຂອງສາຂາ ທຫລ ຕາມຂັ້ນຕອນທີ່ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມຂອບເຂດສິດອຳນາດທີ່ຜູ້ວ່າການໄດ້ມອບໝາຍໃຫ້;

ສຳລັບການຂໍສ້າງຕັ້ງສະຖາບັນການເງິນ ຢູ່ບັນດາແຂວງທີ່ສາຂາ ທຫລ ຮັບຜິດຊອບ ໂດຍສະເພາະການອະນຸຍາດສ້າງຕັ້ງທີ່ລົງລາຍເຊັນໂດຍຜູ້ວ່າການ, ສາຂາ ທຫລ ຈະເປັນຜູ້ຄົ້ນຄວ້າ ແລະ ແນະນຳຜູ້ຂໍສ້າງຕັ້ງໃຫ້ປະຕິບັດຕາມເງື່ອນໄຂ ແລະ ຂັ້ນຕອນການຂໍສ້າງຕັ້ງ. ຖ້າເຫັນວ່າມີເງື່ອນໄຂຄົບຖ້ວນແລ້ວ ໃຫ້ນຳສົ່ງສຳນວນຄຳຮ້ອງການຂໍສ້າງຕັ້ງ ພ້ອມດ້ວຍບົດປະກອບຄຳເຫັນຂອງສາຂາ ທຫລ ເຖິງ ກຄສງ ເພື່ອພິຈາລະນາ ແລະ ສະເໜີຜູ້ວ່າການອະນຸມັດ. ໃນກໍລະນີທີ່ ກຄສງ ບໍ່ເຫັນດີ ກໍ່ຕ້ອງມີເຫດຜົນແຈ້ງຕອບສາຂາ ທຫລ ຢ່າງເປັນລາຍລັກອັກສອນ ຫຼື ແນະນຳສາຂາ ທຫລ ດຳເນີນການໃດໜຶ່ງ ເພື່ອເຮັດໃຫ້ການພິຈາລະນາສຳນວນຄຳຮ້ອງຂໍສ້າງຕັ້ງໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

ສຳລັບການອະນຸຍາດສ້າງຕັ້ງທີ່ຜູ້ວ່າການມອບໝາຍໃຫ້ສາຂາ ທຫລ ມີສິດເຊັນອະນຸມັດ, ໃນກໍລະນີດັ່ງກ່າວ ເມື່ອສາຂາ ທຫລ ໄດ້ອະນຸມັດການຂໍສ້າງຕັ້ງສະຖາບັນການເງິນແລ້ວ ຕ້ອງສົ່ງສຳເນົາໃບອະນຸຍາດສ້າງຕັ້ງ ແລະ ສຳເນົາສຳນວນຄຳຮ້ອງຂໍສ້າງຕັ້ງໃຫ້ ກຄສງ ຊາບ. ນອກນັ້ນ, ສາຂາ ທຫລ ຕ້ອງສັງລວມຂໍ້ມູນສະຖິຕິຂອງບັນດາສະຖາບັນການເງິນ ຢູ່ໃນບັນດາແຂວງທີ່ຕົນຮັບຜິດຊອບ ສົ່ງໃຫ້ ກຄສງ ຢ່າງເປັນລະບົບ;

ໃນກໍລະນີຈຳເປັນ ກຄສງ ສາມາດນຳເອົາສຳນວນຄຳຮ້ອງການຂໍສ້າງຕັ້ງສະຖາບັນການເງິນທີ່ຂຶ້ນກັບສິດອຳນາດຂອງສາຂາ ທຫລ ມາພິຈາລະນາຕາມການມອບໝາຍຂອງຜູ້ວ່າການ.

### ມາດຕາ 2. ວຽກງານກວດກາກັບທີ່

ກຄທ ແລະ ກຄສງ ເປັນຜູ້ຮັບຜິດຊອບ ແລະ ດຳເນີນການກວດກາກັບທີ່ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນ ຕາມໜ້າທີ່ພາລະບົດບາດຂອງກົມ ໃນຂອບເຂດທົ່ວປະເທດ.

ກຄທ ແລະ ກຄສງ ຕ້ອງສົ່ງສຳເນົາບົດລາຍງານການກວດກາທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ທ້ອງຖິ່ນໃຫ້ສາຂາ ທຫລ ຊາບ.

ກຄທ ແລະ ກຄສງ ສາມາດມອບໝາຍໃຫ້ສາຂາ ທຫລ ດຳເນີນການກວດກາກັບທີ່ທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ບັນດາແຂວງທີ່ສາຂາ ທຫລ ຮັບຜິດຊອບ. ພາຍຫຼັງກວດກາສຳເລັດ ສາຂາ ທຫລ ຕ້ອງສົ່ງສຳເນົາບົດລາຍງານການກວດກາ ໃຫ້ ກຄທ ຫຼື ກຄສງ ຊາບ.

**ມາດຕາ 3. ວຽກງານກວດກາທາງເອກະສານ**

ກຄທ ແລະ ກຄສງ ດຳເນີນການກວດກາທາງເອກະສານທະນາຄານທຸລະກິດ, ສາຂາທະນາຄານທຸລະກິດຕ່າງປະເທດ, ສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນ ຕາມໜ້າທີ່ພາລະບົດບາດຂອງກົມ ໃນຂອບເຂດທົ່ວປະເທດ.

ສາຂາ ທຫລ ມີໜ້າທີ່ຕິດຕາມການສົ່ງລາຍງານຖານະການເງິນ ແລະ ກວດກາທາງເອກະສານສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ບັນດາແຂວງທີ່ຕົນຮັບຜິດຊອບ ຕາມແບບລາຍງານຂອງ ທຫລ ແລ້ວສົ່ງສຳເນົາບົດວິເຄາະຖານະການເງິນ ແລະ ສັງລວມລາຍງານສະພາບການເຄື່ອນໄຫວຂອງບັນດາສາຂາທະນາຄານທຸລະກິດພາຍໃນ ແລະ ສະຖາບັນການເງິນດັ່ງກ່າວ ໃຫ້ ກຄທ ແລະ ກຄສງ ຊາບ.

**ມາດຕາ 4. ການຈັດຕັ້ງປະຕິບັດ**

ກຄທ, ກຄສງ ແລະ ສາຂາ ທຫລ ເປັນຜູ້ຈັດຕັ້ງ ຜັນຂະຫຍາຍ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ພູເພັດ ຄຳພູນວົງ